ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 511 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 6 /12/2012

ຫ້ອງການລັດຖະບານ
ເລກທີ 637 ...
ວັນທີ 10/12/2012

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
## ຍຸດທະສາດຕ້ານການສໍ້ລາດບັງຫຼວງ ຮອດປີ 2020

- ອີງຕາມກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບ ເລກທີ 03/ສພຊ, ລົງວັນທີ 19 ພຶດສະພາ 2005.
- ອີງຕາມກົດໝາຍວ່າດ້ວຍການກວດກາລັດ ສະບັບ ເລກທີ 02/ສພຊ, ລົງວັນທີ 02 ກໍລະກົດ 2007.
- ອີງຕາມມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກັນຍາ 2012, ສະບັບເລກທີ 10 /ລບ, ລົງວັນທີ 09/10/2012 .

## ນາຍົກລັດຖະມົນຕີອອກດຳລັດ

ມາດຕາ 1 : ຮັບຮອງ ແລະ ປະກາດໃຊ້ຍຸດທະສາດຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 02 / ນຍ ລົງວັນທີ 04 / 12 / 2012.

ມາດຕາ 2 : ມອບໃຫ້ອົງການກວດກາລັດຖະບານ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດຕ້ານການສໍ້ລາດບັງຫຼວງສະບັບນີ້.

ມາດຕາ 3 : ບັນດາກະຊວງ - ອົງການ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ມີຜົນເປັນຢ່າງດີ.

ມາດຕາ 4 : ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ

D.29.5.2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ພັກປະຊາຊົນປະຕິວັດລາວ

ຄະນະບໍລິຫານງານສູນກາງພັກ.

ເລກທີ...02...../ ຄບສພ

ນະຄອນຫຼວງວຽງຈັນ, ວັນທີ..31..05..2012

# ມະຕິ

## ວ່າດ້ວຍການເພີ່ມທະວີວຽກງານຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນເງື່ອນໄຂໃໝ່

ໃນໄລຍະຜ່ານມາ ສູນກາງພັກໄດ້ອອກມະຕິ, ຄໍາສັ່ງ, ຂໍ້ກໍານົດ ກ່ຽວກັບວຽກງານກວດກາພັກ; ດ້ານລັດ ກໍໄດ້ອອກກົດໝາຍວ່າດ້ວຍການກວດກາລັດ, ກົດໝາຍຕ້ານການສໍ້ລາດບັງຫຼວງ, ກົດໝາຍການແກ້ໄຂຄໍາຮ້ອງທຸກ, ລະບອບ ລະບຽບການ ສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ຕ່າງໆ. ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ຄະນະພັກ, ອົງການລັດ, ການຈັດຕັ້ງອື່ນໆ ແລະ ຄະນະກວດກາຂັ້ນຕ່າງໆ ໄດ້ເປັນເຈົ້າການຈັດຕັ້ງປະຕິບັດການກວດກາຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ອັນໄດ້ເຮັດໃຫ້ວຽກງານກວດກາໄດ້ຮັບການປະຕິບັດ ແລະ ມີຜົນສໍາເລັດໃນຫຼາຍດ້ານ ຊຶ່ງເປັນການປະກອບສ່ວນ ເຮັດໃຫ້ມີຄວາມສະຫງົບທາງການເມືອງ, ເສດຖະກິດ-ສັງຄົມໄດ້ມີການພັດທະນາ ຕາມທິດທີ່ໄດ້ກໍານົດໄວ້, ການລົງທຶນຂອງພາຍໃນ ແລະ ຕ່າງປະເທດໄດ້ເພີ່ມຂຶ້ນ ຊຶ່ງໂດຍພື້ນຖານແມ່ນໄດ້ດໍາເນີນ ໄປຖືກຕ້ອງຕາມລະບຽບ, ກົດໝາຍ ແລະ ມີປະສິດທິຜົນ, ປະກົດການຫຍໍ້ທໍ້ຕ່າງໆໄດ້ຮັບການແກ້ໄຂໂດຍພື້ນຖານ. ຄະນະພັກ, ອົງການລັດຂັ້ນຕ່າງໆ ໄດ້ຮັບຮູ້ທັດສະນະຂອງພັກທີ່ວ່າ: ວຽກງານກວດກາ ແມ່ນໜຶ່ງໃນພາລະບົດບາດການນໍາພາຂອງພັກ, ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງ ຂອງຄະນະພັກ. ຜ່ານມາມີຫຼາຍອົງຄະນະພັກໄດ້ເອົາໃຈໃສ່ຊີ້ນໍາວຽກງານກວດກາຢ່າງແທດເຖິງ ແລະ ແກ້ໄຂຜົນຂອງການກວດກາຕາມຂອບເຂດຄວາມຮັບຜິດຊອບຂອງຕົນ. ຜ່ານການກວດກາພາຍໃນພັກ ແລະ ກວດກາລັດແຕ່ລະຄັ້ງ, ແຕ່ລະເປົ້າໝາຍ ພວກເຮົາສາມາດເສີມຂະຫຍາຍໄດ້ດ້ານດີ, ປັດໄຈໃໝ່ທີ່ຕັ້ງໜ້າ; ພ້ອມກັນນັ້ນ, ກໍຈໍາກັດ ແກ້ໄຂສະພາບຫຍໍ້ທໍ້ດ້ານຕ່າງໆ ທີ່ເກີດຂຶ້ນໃນການຈັດຕັ້ງ ຂອງພັກ, ລັດ ແລະ ສັງຄົມໄດ້ໃນຫຼາຍດ້ານ. ສັງລວມແລ້ວ, ໃນຊຸມປີຜ່ານມາ ວຽກງານກວດກາໄດ້ປະກອບສ່ວນເຂົ້າໃນການປັບປຸງກໍ່ສ້າງພັກ, ການຄຸ້ມຄອງລັດ ແລະ ປ້ອງກັນພະນັກງານ, ສະມາຊິກ ພັກໃຫ້ມີຄວາມປອດໃສເຂັ້ມແຂງ.

ສໍາລັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພັກ - ລັດພວກເຮົາເວລາໃດກໍໄດ້ເອົາໃຈໃສ່ ແລະ ຖືສໍາຄັນບັນຫານີ້, ເຫັນໄດ້ຜົນຮ້າຍຂອງການສໍ້ລາດບັງຫຼວງທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງ ແລະ ໃນຖັນແຖວພະນັກງານ, ສະມາຊິກພັກ ຊຶ່ງກະທົບເຖິງບົດບາດການນໍາພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ຄວາມໝັ້ນຄົງຂອງລະບອບພວກເຮົາ. ດັ່ງນັ້ນໃນໄລຍະຜ່ານມາ, ຄະນະພັກ,

ອົງການປົກຄອງແຕ່ລະຂັ້ນກໍ່ໄດ້ເອົາໃຈໃສ່ສຶກສາອົບຮົມເຜີຍແຜ່ກົດໝາຍ, ຂໍ້ກຳນົດກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ໄດ້ດຳເນີນການກວດກາໃນຫຼາຍຂົງເຂດ, ຫຼາຍເປົ້າໝາຍ. ຜ່ານການກວດກາກໍ່ສາມາດສະກັດກັ້ນປະກົດການຫຍໍ້ທໍ້ ແລະ ເກັບກູ້ວັດຖຸຊັບສິນ, ເງິນຄຳທີ່ຕົກເຮ່ຍເສຍຫາຍຄືນມາໃຫ້ພັກ, ລັດ, ລວມໝູ່ ແລະ ພົນລະເມືອງເປັນຈຳນວນບໍ່ໜ້ອຍ. ນອກຈາກນັ້ນຄະນະພັກ, ອົງການປົກຄອງ, ຄະນະກວດກາຂັ້ນຕ່າງໆຍັງໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງ-ຄຳສະເໜີຂອງສະມາຊິກພັກ, ພະນັກງານ ແລະ ປະຊາຊົນຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ; ໄດ້ປັບປຸງ, ຍົກສູງຄວາມຮັບຜິດຊອບຂອງພະນັກງານ ແລະ ການຈັດຕັ້ງຕໍ່ການພິຈາລະນາແກ້ໄຂບັນຫາຕ່າງໆຖືກຕ້ອງຕາມຕົວຈິງ ແລະ ມີຄວາມຍຸຕິທຳ, ເຮັດໃຫ້ເປົ້າໝາຍຕ່າງໆ ທີ່ມີຄຳຮ້ອງ-ຄຳສະເໜີສ່ວນຫຼາຍມີຄວາມສະຫງົບ, ເຫັນໄດ້ຄວາມເອົາໃຈໃສ່ຂອງການຈັດຕັ້ງພັກ-ລັດ ແລະ ການຈັດຕັ້ງອື່ນໆ ທີ່ມີຕໍ່ຕົນເອງ, ເປັນການປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ຄູ່ຄວາມມີຄວາມເຂົ້າໃຈເຊິ່ງກັນ ແລະ ກັນ.

ສຳລັບກົງຈັກການຈັດຕັ້ງຂອງຄະນະກວດກາແຕ່ລະຂັ້ນ ກໍ່ໄດ້ຮັບການປັບປຸງໂດຍສອດຄ່ອງກັບທິດຊີ້ນຳຂອງກົມການເມືອງສູນກາງພັກ ໄດ້ໂຮມເອົາການຈັດຕັ້ງຄະນະກວດກາພັກ ແລະ ອົງການກວດກາລັດ ເຂົ້າກັນເປັນກົງຈັກອັນດຽວແຕ່ສູນກາງລົງຮອດທ້ອງຖິ່ນ, ເຮັດທັງພາລະບົດບາດກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ; ໄດ້ເອົາໃຈໃສ່ບຳລຸງກໍ່ສ້າງພະນັກງານກວດກາ ໃຫ້ມີຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະດີຂຶ້ນເທື່ອລະກ້າວ, ຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ, ນ້ຳໃຈຮັບຜິດຊອບ, ສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບກົດໝາຍ ແລະ ບົດຮຽນການກວດກາຕົວຈິງ ກໍ່ໄດ້ຮັບການປັບປຸງດີຂຶ້ນຕື່ມ.

ຄຽງຄູ່ກັບດ້ານຕັ້ງໜ້າ ພວກເຮົາກໍ່ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂຄື:

ທັດສະນະຄວາມຮັບຮູ້ເຂົ້າໃຈຕໍ່ວຽກງານກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຂອງຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ແລະ ພະນັກງານ, ສະມາຊິກພັກຈຳນວນໜຶ່ງບໍ່ທັນເລິກເຊິ່ງເທົ່າທີ່ຄວນ, ຍັງມີສະພາບຖືເບົາວຽກງານກວດກາ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ຖືວ່າວຽກງານກວດກາແມ່ນໜ້າທີ່ສະເພາະຂອງຂະແໜງກວດກາ, ຍິ່ງໄປກວ່ານັ້ນ ພະນັກງານຈຳນວນໜຶ່ງຍັງຢ້ານການກວດກາ, ເຂົ້າໃຈການກວດກາໃນທາງລົບ. ດັ່ງນັ້ນ ຈຶ່ງບໍ່ທັນໄດ້ເອົາໃຈໃສ່ຊີ້ນຳຕໍ່ວຽກງານກວດກາປົກກະຕິ, ເມື່ອເກີດມີບັນຫາແລ້ວຈຶ່ງດຳເນີນການກວດກາ, ບາງກໍລະນີຂໍ້ມູນການກວດກາ ກໍ່ບໍ່ທັນຊັດເຈນ, ເມື່ອກວດກາເຫັນບັນຫາແລ້ວ ກໍ່ບໍ່ເອົາໃຈໃສ່ແກ້ໄຂຜົນຂອງການກວດກາຢ່າງຖືກຕ້ອງ, ຄົບຖ້ວນ, ເຂັ້ມງວດ, ຂາດຕົວ ແລະ ທັນການ. ການປັບປຸງກົງຈັກການຈັດຕັ້ງຂອງຄະນະກວດກາແຕ່ລະຂັ້ນ ບໍ່ທັນເອົາໃຈໃສ່ເທົ່າທີ່ຄວນ, ຈຳນວນ ແລະ ຄຸນນະພາບ ຂອງພະນັກງານບໍ່ທັນຕອບສະໜອງກັບຄວາມຕ້ອງການຂອງໜ້າທີ່ວຽກງານກວດກາ ໂດຍສະເພາະແມ່ນຢູ່ຂັ້ນເມືອງ ແລະ ຮາກຖານ; ການປະຕິບັດໜ້າທີ່ ຂອງຄະນະກວດກາແຕ່ລະຂັ້ນບໍ່ທັນເຂັ້ມແຂງ, ຄວາມຮັບຜິດຊອບ ແລະ ຄວາມກ້າຫານບໍ່ທັນສູງ, ທັດສະນະໃນການເບິ່ງບັນຫາມີອັນບໍ່ທັນເລິກເຊິ່ງ

ຮອບຄອບ; ນິຕິກຳດ້ານວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງບໍ່ທັນຄົບຊຸດ; ກົນໄກ, ລະບຽບ, ລະບຽບການ ແລະ ນະໂຍບາຍສຳລັບພະນັກງານກວດກາກໍ່ບໍ່ທັນລະອຽດຈະແຈ້ງ, ການສ້າງເງື່ອນໄຂອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານກວດກາ ກໍ່ບໍ່ທັນເຮັດໄດ້ດີ.

ສິ່ງທີ່ກ່າວມາຂ້າງເທິງນັ້ນ ຊີ້ບອກໃຫ້ເຫັນວ່າຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາແຕ່ລະຂັ້ນສ່ວນຫຼາຍໄດ້ເອົາໃຈໃສ່ຕໍ່ວຽກງານກວດກາ, ຖືເອົາການຕິດຕາມ, ກວດກາແມ່ນໜຶ່ງໃນຄວາມຮັບຜິດຊອບຂອງຕົນ. ແຕ່ພ້ອມກັນນີ້ກໍ່ເຫັນວ່າວຽກງານກວດກາຢູ່ແຕ່ລະຂົງເຂດ, ແຕ່ລະຂັ້ນບໍ່ທັນກາຍເປັນຂອງມະຫາຊົນຢ່າງແທ້ຈິງ; ຄະນະພັກຈຳນວນໜຶ່ງບໍ່ທັນຖືສຳຄັນ ແລະ ບໍ່ທັນເອົາໃຈໃສ່ຊີ້ນຳ, ນຳພາວຽກງານກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຢ່າງຕັ້ງໜ້າແທ້.

ເພື່ອເພີ່ມທະວີການນຳພາ ຂອງພັກຕໍ່ວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ທັງເປັນການຊີ້ທິດ ໃຫ້ແກ່ການຈັດຕັ້ງຜັນຂະຫຍາຍຈິດໃຈເນື້ອໃນມະຕິກອງປະຊຸມໃຫຍ່ຄັ້ງ ທີ IX ຂອງພັກກ່ຽວກັບວຽກງານຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ; ເສີມຂະຫຍາຍດ້ານຕັ້ງໜ້າ ແລະ ແກ້ໄຂ ດ້ານຄົງຄ້າງ ໃນໄລຍະຜ່ານມາ.

ຄະນະບໍລິຫານງານສູນກາງພັກອອກມະຕິ:

I. <u>ທັດສະນະຂອງພັກ ແລະ ຈຸດປະສົງລະດັບຄາດໝາຍຂອງວຽກງານກວດກາ.</u>

ກ. <u>ທັດສະນະຂອງພັກ</u>.

ພັກເຮົາຍາມໃດກໍ່ຖືວ່າ ວຽກງານຕິດຕາມ, ກວດກາ ແມ່ນໜຶ່ງໃນພາລະບົດບາດການນຳພາຂອງຕົນ, ບໍ່ມີການກວດກາກໍ່ໝາຍຄວາມວ່າບໍ່ມີການນຳພາ. ວຽກງານຕິດຕາມ, ກວດກາແມ່ນວຽກທີ່ສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານ, ເປັນວຽກທີ່ຕ້ອງເຮັດເປັນປົກກະຕິ ແລະ ຂາດບໍ່ໄດ້ ສຳລັບການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ; ການຈັດຕັ້ງພັກທຸກຂັ້ນ ແລະ ສະມາຊິກພັກທຸກລະດັບ ຕ້ອງຢູ່ພາຍໃຕ້ການຕິດຕາມ, ກວດກາຂອງພັກ, ຄະນະພັກແຕ່ລະຂັ້ນ ເປັນຜູ້ຊີ້ນຳໂດຍກົງທັງເປັນຜູ້ຕິດຕາມ, ກວດກາທຸກການເຄື່ອນໄຫວຂອງການຈັດຕັ້ງ ແລະ ພະນັກງານ, ສະມາຊິກພັກທີ່ຢູ່ໃຕ້ການນຳພາ-ຄຸ້ມຄອງຂອງຕົນ, ເປັນຜູ້ພິຈາລະນາແກ້ໄຂຜົນຂອງການກວດກາແຕ່ລະຄັ້ງ-ແຕ່ລະເປົ້າໝາຍ, ມີຄວາມຮັບຜິດຊອບຊີ້ນຳ-ນຳພາຄະນະກວດກາ ແລະ ພະນັກງານກວດກາຢູ່ຂັ້ນ ຂອງຕົນໃຫ້ປະຕິບັດ ການຕິດຕາມ, ກວດກາຕາມພາລະບົດບາດ, ໜ້າທີ່, ສິດທີ່ກຳນົດໄວ້ໃນກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

ພັກເຮົາຖືວ່າການສະກັດກັ້ນ ແລະ ແກ້ໄຂບັນຫາການສໍ້ລາດບັງຫຼວງແມ່ນຄວາມຮັບຜິດຊອບໂດຍກົງຂອງພັກ, ລັດ ແລະ ຂອງທຸກການຈັດຕັ້ງໃນສັງຄົມ ເພາະວ່າບັນຫານີ້ໄດ້ກາຍເປັນບັນຫາລວມ ຂອງສາກົນ ແລະ ພາກພື້ນ ຊຶ່ງຄະນະພັກ ແລະ ອົງການປົກຄອງທຸກຂັ້ນ ຕ້ອງຖືສຳຄັນ ແລະ ເອົາໃຈໃສ່ຢ່າງຕັ້ງໜ້າກວ່າເກົ່າ. ໃນເງື່ອນໄຂທີ່ພວກເຮົາ ສືບຕໍ່ຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານຂອງພັກ, ໂດຍສະເພາະແມ່ນການປະຕິບັດກົນໄກເສດຖະກິດຕະຫຼາດ ແລະ ການ

ເງື່ອນໄຂງາກິນ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຍິ່ງມີຄວາມຈຳເປັນພາວະວິໄສ, ເປັນໜ້າທີ່ສຳຄັນ, ຮີບດ່ວນ, ຍາວນານ ແລະ ເປັນຄວາມຮັບຜິດຊອບໂດຍກົງຂອງພັກ, ຂອງລັດ ແລະ ທຸກການຈັດຕັ້ງໃນລະບົບການເມືອງ.

ຂ. ຈຸດປະສົງລະດັບຄາດໝາຍ.

1. ເພື່ອປັບປຸງກໍ່ສ້າງພັກໃຫ້ໜັກແໜ້ນ, ເຂັ້ມແຂງ, ຮັກສາໄດ້ບົດບາດ ແລະ ຄວາມສາມາດກຳອຳນາດຂອງພັກ, ເຮັດໃຫ້ພັກມີຄວາມເປັນເອກະພາບທາງດ້ານແນວຄິດ ແລະ ການກະທຳ, ຮັບປະກັນໃຫ້ພັກສືບຕໍ່ນຳພາພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ກ້າວເດີນໄປຕາມທິດທີ່ພັກກຳນົດໄວ້.

2. ເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ກໍ່ຄືກົດລະບຽບຂອງພັກສະໄໝທີ IX ແລະ ສະໄໝຕໍ່ໆໄປກ່ຽວກັບວຽກງານຕິດຕາມ, ກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ດ້ວຍບາດກ້າວບຸກທະລຸທີ່ຕັ້ງໜ້າ.

3. ເພື່ອປັບປຸງທັດສະນະ, ຄວາມຮັບຮູ້ເຂົ້າໃຈ ແລະ ຄວາມຮັບຜິດຊອບຂອງພະນັກງານນຳພາ ຄຸ້ມຄອງແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານທຸກລະດັບຕໍ່ວຽກງານຕິດຕາມ ກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

4. ຕ້ອງເຮັດໃຫ້ການຕິດຕາມ, ກວດກາ ກາຍເປັນເຄື່ອງມື ແລະ ວິທີການປົກປ້ອງແນວທາງ, ນະໂຍບາຍ, ມະຕິຄຳສັ່ງຂອງພັກ ແລະ ລະບຽບກົດໝາຍຂອງລັດ, ປົກປ້ອງພະນັກງານ-ສະມາຊິກພັກ; ກວດກາ ເພື່ອສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ປະກອບສ່ວນຊ່ວຍເຮັດໃຫ້ສັງຄົມມີຄວາມສະຫງົບ, ຍຸຕິທຳ ແລະ ເຮັດໃຫ້ກົງຈັກການຈັດຕັ້ງມີຄວາມເຂັ້ມແຂງ, ຖັນແຖວພະນັກງານ-ສະມາຊິກພັກມີຄວາມປອດໃສ ແລະ ເຕີບໃຫຍ່ເຂັ້ມແຂງຂຶ້ນເລື້ອຍໆ.

5. ການກວດກາແຕ່ລະຄັ້ງ, ແຕ່ລະເປົ້າໝາຍ ຕ້ອງຊອກໃຫ້ເຫັນດ້ານດີ, ດ້ານຕັ້ງໜ້າ ແລະ ປັດໄຈໃໝ່ ທີ່ກ້າວໜ້າເພື່ອເສີມຂະຫຍາຍ, ພ້ອມກັນນັ້ນກໍ່ຕ້ອງຊອກໃຫ້ເຫັນດ້ານອ່ອນ, ຂໍ້ຄົງຄ້າງ ແລະ ສິ່ງຫຍໍ້ທໍ້ຕ່າງໆ ເພື່ອປັບປຸງແກ້ໄຂໃຫ້ທັນການ ແລະ ເຂັ້ມງວດ; ການຕິດຕາມ, ກວດກາແມ່ນແນໃສ່ເພື່ອກຳຈັດປັດເປົ່າສະພາບຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງ ແລະ ຖັນແຖວພະນັກງານ, ສະມາຊິກພັກ ບໍ່ໃຫ້ເກີດມີການລະເມີດກົດລະບຽບຂອງພັກ ແລະ ລະບຽບ, ກົດໝາຍຂອງລັດ.

II. ທິດທາງລວມ ແລະ ທິດທາງໜ້າທີ່ວຽກງານກວດກາແຕ່ລະຂົງເຂດ.

ກ. ທິດທາງລວມ.

ຢາກປັບປຸງກໍ່ສ້າງພັກ ໃຫ້ປອດໃສ, ໜັກແໜ້ນເຂັ້ມແຂງ, ສ້າງລັດໃຫ້ເປັນລັດແຫ່ງກົດໝາຍ, ລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ເປັນລັດທີ່ມີຄວາມຍຸຕິທຳ ແລະ ໂປ່ງໃສ, ເຄື່ອນໄຫວມີປະສິດທິພາບ ແລະ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຖືກຕ້ອງຕາມລະບຽບ, ກົດໝາຍ ພວກເຮົາຕ້ອງໃຫ້ຄວາມສຳຄັນເພີ່ມຂຶ້ນ ຕໍ່ການຍົກສູງຄຸນນະພາບຂອງວຽກງານກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໄປພ້ອມກັບການປັບປຸງກົງຈັກຂອງຄະ

ນະກວດກາພັກ-ລັດແຕ່ລະຂັ້ນໃຫ້ໜັກແໜ້ນ, ເຂັ້ມແຂງ, ຍົກສູງລະດັບຄວາມຮູ້, ຄວາມສາມາດ, ນ້ຳໃຈຮັບຜິດຊອບ ແລະ ການມີລະບຽບວິໄນຂອງພະນັກງານກວດກາ; ຄົ້ນຄວ້າວາງລະບອບ, ລະບຽບ ແລະ ກົນໄກການກວດກາພາຍໃນພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃຫ້ເປັນລະບົບຄົບຊຸດເທື່ອລະກ້າວ ເປັນຕົ້ນແມ່ນກົນໄກ ແລະ ລະບອບ, ລະບຽບການກວດກາວຽກງານ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ບຸກຄົນ, ລະບຽບການຕິດຕາມ, ກວດກາຂອງຂັ້ນເທິງຕໍ່ຂັ້ນລຸ່ມ ແລະ ການປະກອບຄຳເຫັນຂອງຂັ້ນລຸ່ມຕໍ່ຂັ້ນເທິງ; ສົມທົບແໜ້ນການກວດກາຂອງພັກກັບການກວດກາຂອງລັດ, ການກວດກາຂອງບັນດາອົງການຈັດຕັ້ງມະຫາຊົນ ແລະ ການກວດກາຂອງປະຊາຊົນໃຫ້ແນບແໜ້ນກົມກຽວກັນ, ສ້າງເງື່ອນໄຂ ໃຫ້ມະຫາຊົນສາມາດເຂົ້າຮ່ວມການກວດກາ ຢ່າງກວ້າງຂວາງ ແລະ ເປັນເຈົ້າການ; ເພີ່ມທະວີການກວດກາເພື່ອສະກັດກັ້ນ ແລະ ແກ້ໄຂສິ່ງຫຍໍ້ທໍ້ຕ່າງໆ ໃນກິດຈະການຈັດຕັ້ງຂອງພັກ, ລັດ ແລະ ໃນສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງ, ກວດກາຊອກໃຫ້ເຫັນດ້ານຕັ້ງໜ້າ ແລະ ປັດໄຈໃໝ່ ເພື່ອຊຸກຍູ້ສົ່ງເສີມໃຫ້ດີຂຶ້ນເລື້ອຍໆ; ຕ້ອງຖືເອົາການຕິດຕາມ, ກວດກາແຕ່ຫົວທີ ເພື່ອສະກັດກັ້ນສິ່ງຫຍໍ້ທໍ້ເປັນຕົ້ນຕໍ, ເອົາການກວດກາແກ້ໄຂເມື່ອມີການລະເມີດເປັນອັນຈຳເປັນ.

<u>ຂ. ທິດທາງ, ໜ້າທີ່ ວຽກງານກວດກາແຕ່ລະຂົງເຂດ.</u>

ເພື່ອປະຕິບັດບັນດາຄາດໝາຍ ແລະ ທິດທາງລວມ ທີ່ໄດ້ກຳນົດໄວ້ນັ້ນ, ຄະນະພັກ, ຄະນະນຳຂອງທຸກການຈັດຕັ້ງພັກ-ລັດ ແລະ ຄະນະກວດກາແຕ່ລະຂັ້ນ ຕ້ອງປະຕິບັດວຽກງານກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ດັ່ງນີ້:

1. <u>ການຕິດຕາມ, ກວດກາພາຍໃນພັກ.</u>

ຄະນະພັກ, ຄະນະກວດກາແຕ່ລະຂັ້ນ ຕ້ອງກຳແໜ້ນ ແລະ ຖືສຳຄັນການຕິດຕາມ, ກວດກາເປັນປົກກະຕິ ຕໍ່ການຈັດຕັ້ງພັກ ແລະ ບຸກຄົນໃນຄະນະພັກ, ສະມາຊິກພັກ, ເພື່ອສະກັດກັ້ນບໍ່ໃຫ້ເກີດມີການລ່ວງລະເມີດ ແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ຂໍ້ກຳນົດ ແລະ ກົດໝາຍຂອງລັດ, ພ້ອມກັນນັ້ນ ກໍ່ຕ້ອງດຳເນີນການກວດກາແກ້ໄຂບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດລະບຽບຂອງພັກ, ເຮັດຜິດແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ຝ່າຝືນຂໍ້ກຳນົດ, ກົດໝາຍຂອງລັດຢ່າງເຂັ້ມງວດ; ຕ້ອງກຳແໜ້ນ ແລະ ປະຕິບັດຢ່າງເຂັ້ມງວດຈິດໃຈເນື້ອໃນກົດລະບຽບຂອງພັກທີ່ວ່າ" ການຈັດຕັ້ງພັກທຸກຂັ້ນ ແລະ ສະມາຊິກພັກທຸກສະຫາຍຕ້ອງຢູ່ພາຍໃຕ້ການຕິດຕາມ, ກວດກາຂອງພັກ ".

ການຕິດຕາມ, ກວດກາພາຍໃນພັກແມ່ນ: ຕ້ອງຕິດຕາມ, ກວດກາ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງກໍ່ຄືເນື້ອໃນມະຕິກອງປະຊຸມໃຫຍ່ຂອງພັກ, ຂອງຄະນະພັກຂັ້ນຕ່າງໆແຕ່ລະສະໄໝ; ບັນດາມະຕິ ຂອງຄະນະບໍລິຫານງານສູນກາງພັກ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ ຂອງກົມການເມືອງ, ຂອງຄະນະເລຂາທິການສູນກາງພັກ ແລະ ຄະນະພັກແຕ່ລະຂັ້ນ; ຕິດຕາມ, ກວດກາການປະຕິບັດກົດລະບຽບຂອງພັກ; ແບບແຜນນຳພາ, ວິທີເຮັດວຽກຂອງຄະນະພັກ ແລະ ພະນັກງານການນຳ

ແຕ່ລະຂັ້ນ ໂດຍສະເພາະການປະຕິບັດຫຼັກການລວມສູນປະຊາທິປະໄຕ ຂອງພັກ, ບັນຫາພະຍາດອາດຍາສິດຫ່າງເຫີນຈາກຕົວຈິງ, ການລ່ວງເກີນສິດອຳນາດທີ່ກຳນົດໄວ້ ແລະ ອື່ນໆ; ຕິດຕາມ, ກວດກາຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບວິໄນ ຂອງພັກ ແລະ ກົດໝາຍ ຂອງລັດ, ນ້ຳໃຈຮັບຜິດຊອບ ແລະ ການຝຶກຝົນຫຼໍ່ຫຼອມຕົນເອງ ຂອງຄະນະພັກ ແລະ ສະມາຊິກພັກແຕ່ລະສະຫາຍ; ຕິດຕາມ, ກວດກາການປັບປຸງກໍ່ສ້າງພັກ ຢູ່ແຕ່ລະຂົງເຂດ, ເປັນຕົ້ນແມ່ນການກໍ່ສ້າງໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ, ກວດກາເນື້ອໃນດຳເນີນຊີວິດການເມືອງພາຍໃນຄະນະພັກ ແລະ ການຈັດຕັ້ງຮາກຖານພັກ, ການຕິຊົມຕົນເອງ ແລະ ຕິຊົມກັນ ຢູ່ພາຍໃນຄະນະພັກ, ໜ່ວຍພັກ; ກວດກາການຕົກລົງວິໄນພາຍໃນພັກ ແລະ ກວດກາການເງິນຂອງພັກ.

ການກວດກາຕ້ອງຖືເອົາການຕິດຕາມ, ກວດກາປົກກະຕິເປັນຕົ້ນຕໍ ແນໃສ່ສະກັດກັ້ນເພື່ອບໍ່ໃຫ້ການຈັດຕັ້ງ ແລະ ສະມາຊິກພັກ ລ່ວງລະເມີດກົດລະບຽບ ຂອງພັກ, ມະຕິ, ຄຳສັ່ງ ຂອງຂັ້ນເທິງ, ຂໍ້ກຳນົດ ແລະ ກົດໝາຍຂອງລັດ. ພ້ອມກັນນັ້ນ ກໍ່ເອົາໃຈໃສ່ຄົ້ນຄວ້າ ແລະ ດຳເນີນການກວດກາຕາມຄຳຮ້ອງ-ຄຳສະເໜີຂອງການນຈັດຕັ້ງ ແລະ ບຸກຄົນສະມາຊິກພັກ, ລົງເລິກກວດກາການລະເມີດກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

2. ການກວດກາລັດ.

ການກວດກາລັດເປັນວຽກງານໜຶ່ງທີ່ສັບສົນ, ກວ້າງຂວາງກວມເອົາທຸກຂົງເຂດ ຊຶ່ງລວມມີການຕິດຕາມ, ກວດກາຕາມຂັ້ນບໍລິຫານການປົກຄອງ ແລະ ກວດກາຕາມຂະແໜງການ. ສະນັ້ນຄະນະພັກ, ຄະນະນຳກະຊວງ-ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການກວດກາລັດທຸກຂັ້ນຕ້ອງກຳແໜ້ນ ແລະ ປະຕິບັດກົດໝາຍການກວດກາລັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ.

ການກວດກາລັດແມ່ນ: ກວດກາການປະຕິບັດພາລະບົດບາດ, ໜ້າທີ່ ແລະ ສິດອຳນາດຂອງແຕ່ລະຂະແໜງການ, ແຕ່ລະທ້ອງຖິ່ນ; ກວດກາການປະຕິບັດບັນດາຂໍ້ກຳນົດ, ລະບອບ - ລະບຽບການ, ບັນດາກົດໝາຍ, ຄຳສັ່ງ, ຄຳແນະນຳຕ່າງໆທີ່ລັດປະກາດໃຊ້; ກວດກາການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ(ລາຍຮັບ-ລາຍຈ່າຍ), ຖືສຳຄັນ ແລະ ເອົາໃຈໃສ່ລົງເລິກຕິດຕາມ, ກວດກາການປະຕິບັດໂຄງການລົງທຶນຕ່າງໆຢູ່ແຕ່ລະຂົງເຂດ ໂດຍຖືເອົາການຕິດຕາມ, ກວດກາແຕ່ຫົວທີ ນັບແຕ່ຂອດຈັດຕັ້ງການປະມູນ, ຂອດຄຸ້ມຄອງການຈັດຕັ້ງປະຕິບັດ, ຄຸນນະພາບຂອງໂຄງການ ແລະ ອື່ນໆ ໃຫ້ໄປຕາມກົດໝາຍ, ຕາມວິໄນແຜນການ ການເງິນ, ຖືກຕາມສັນຍາ ແລະ ລະບຽບການຕ່າງໆຂອງລັດ.

ການກວດກາລັດ ຕ້ອງຖືເອົາການກວດກາຕາມແຜນການປົກກະຕິ, ກວດກາແຕ່ຫົວທີ ເພື່ອສະກັດກັ້ນການລ່ວງລະເມີດເປັນຕົ້ນຕໍ, ພ້ອມກັນນັ້ນ ກໍ່ດຳເນີນການກວດກາຕາມຄຳຮ້ອງ-ຄຳສະເໜີຂອງການຈັດຕັ້ງ ແລະ ພົນລະເມືອງ ໂດຍມີການຄົ້ນຄວ້າ, ວິເຄາະ, ວິໄຈຢ່າງເລິກເຊິ່ງ, ຮອບຄອບ ແລະ ແກ້ໄຂຜົນການກວດກາຢ່າງຕັ້ງໜ້າຕາມພາລະບົດບາດ, ຂອບເຂດສິດຂອງແຕ່ລະຂັ້ນຢ່າງຖືກຕ້ອງ, ເຂັ້ມງວດ ແລະ ທັນການ.

D.29.5.2C 2

3. ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

ບັນຫາການສໍ້ລາດບັງຫຼວງໄດ້ເປັນ ແລະ ພວມເປັນໄພຂົ່ມຂູ່ ຕໍ່ສະຖຽນລະພາບ ຂອງການຈັດຕັ້ງ ແລະ ພະນັກງານ, ເປັນບັນຫາທີ່ບັນດາປະເທດ ແລະ ອົງການຈັດຕັ້ງສາກົນ ເອົາໃຈໃສ່ຕິດຕາມເບິ່ງການຈັດຕັ້ງປະຕິບັດ ຂອງພວກເຮົາ, ທັງເປັນບັນຫາໜຶ່ງ ທີ່ກະທົບເຖິງບົດບາດການນໍາພາ ຂອງພັກ, ການຄຸ້ມຄອງ ຂອງລັດ ແລະ ລະບອບການເມືອງຂອງພວກເຮົາ, ເປັນການບົ່ງບອກເຖິງຄວາມສາມາດ ກໍຄືປະສິດທິຜົນ ຂອງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃນເງື່ອນໄຂເສດຖະກິດຕະຫຼາດ ແລະ ການມີລະບຽບວິໄນເຂັ້ມງວດ ຫຼື ບໍ່ເຂັ້ມງວດໃນລັດຖະການ ຂອງພວກເຮົາ. ດ້ວຍເຫດນັ້ນທຸກການຈັດຕັ້ງຂອງພັກ, ຂອງລັດ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ, ການຈັດຕັ້ງສັງຄົມຕ່າງໆ ຕະຫຼອດຮອດພະນັກງານ, ສະມາຊິກພັກ ແລະ ພົນລະເມືອງທຸກຄົນ ຕ້ອງກໍາແໜ້ນ ແລະ ປະຕິບັດຢ່າງເຂັ້ມງວດ ກົດໝາຍຕ້ານການສໍ້ລາດບັງຫຼວງ ແລະ ນິຕິກໍາອື່ນໆ ກ່ຽວກັບການສະກັດກັ້ນສິ່ງຫຍໍ້ທໍ້ຕ່າງໆ, ພ້ອມກັນນັ້ນ ລັດຖະບານຕ້ອງຮີບຮ້ອນຄົ້ນຄວ້າວາງຍຸດທະສາດສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ລະບຽບການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ ຕາມທີ່ກົດໝາຍໄດ້ກໍານົດໄວ້; ຄົ້ນຄວ້າອອກລະບອບ, ລະບຽບການລະອຽດ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ເພື່ອກໍາຈັດປັດເປົ່າບັນດາເລ່ຫຼ່ຽມ ແລະ ພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ; ມີກົນໄກທີ່ສອດຄ່ອງເພື່ອສ້າງເງື່ອນໄຂໃຫ້ມະຫາຊົນໄດ້ເຂົ້າຮ່ວມຢ່າງແຂງແຮງຕໍ່ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນທົ່ວປະເທດ.

4. ການແກ້ໄຂຜົນຂອງການກວດກາ.

ການແກ້ໄຂຜົນການກວດກາເປັນວຽກໜຶ່ງທີ່ສໍາຄັນຕັດສິນ ແລະ ຈໍາເປັນ. ສະນັ້ນ, ເມື່ອໄດ້ດໍາເນີນການກວດກາແລ້ວ ຕ້ອງແກ້ໄຂຜົນຂອງການກວດກາໃຫ້ມີຜົນສັກສິດ. ຄະນະພັກ, ອົງການລັດແຕ່ລະຂັ້ນ ແລະ ການຈັດຕັ້ງອື່ນໆ ຕ້ອງເພີ່ມທະວີຄວາມຮັບຜິດຊອບ ເປັນເຈົ້າການຊີ້ນໍາ, ນໍາພາ ແລະ ດໍາເນີນການແກ້ໄຂຜົນ ຂອງການກວດກາແຕ່ລະຄັ້ງ-ແຕ່ລະເປົ້າໝາຍໃຫ້ຖືກຕ້ອງ, ຄົບຖ້ວນ, ທັນການ, ເຂັ້ມງວດ ແລະ ມີຜົນສັກສິດ ຕາມທິດຊີ້ນໍາຂອງພັກທີ່ວ່າ:" ສິ່ງສໍາຄັນແມ່ນຕ້ອງປະຕິບັດຜົນການກວດກາ ໃຫ້ສັກສິດ". ເມື່ອກວດກາເຫັນບັນຫາຢູ່ບ່ອນໃດ, ໃນຄວາມຮັບຜິດຊອບ ຂອງຜູ້ໃດໃຫ້ຄະນະພັກ ຄະນະນໍາຂອງການຈັດຕັ້ງທີ່ຮັບຜິດຊອບຢູ່ບ່ອນນັ້ນ ເປັນເຈົ້າການຄົ້ນຄວ້າຕົກລົງເປັນເອກະພາບແກ້ໄຂຢ່າງຂາດຕົວ. ການແກ້ໄຂຜົນຂອງການກວດກາຕ້ອງມີການປະສານສົມທົບ ຢ່າງກົມກຽວກັບພາກສ່ວນ ແລະ ຂະແໜງການທີ່ມີການກ່ຽວພັນ, ຮັບປະກັນຄວາມຖືກຕ້ອງ, ຊັດເຈນ, ຄົບຖ້ວນ, ພາວະວິໄສ, ເປັນທໍາ ແລະ ທັນການ ໂດຍຖືເອົາການສຶກສາອົບຮົມເປັນສິ່ງສໍາຄັນພື້ນຖານ ແລະ ເອົາກົດໝາຍເປັນບ່ອນອີງ. ພ້ອມນັ້ນ ຕ້ອງໄດ້ເຜີຍແຜ່ບົດຮຽນ, ຕົວແບບທີ່ດີ ຊຶ່ງພົບເຫັນຜ່ານການກວດກາ.

5. ການພົວພັນຮ່ວມມືກັບຕ່າງປະເທດ:

ວຽກງານກວດກາເວົ້າລວມ, ໂດຍສະເພາະວຽກງານກວດກາລັດ, ການສະກັດກັ້ນ ແລະ ຕ້ານ

ການສໍ້ລາດບັງຫຼວງ ແມ່ນໄດ້ກາຍເປັນບັນຫາທີ່ທຸກປະເທດຢູ່ໃນໂລກ ແລະ ອົງການຈັດຕັ້ງສາກົນຖື ເປັນບັນຫາສຳຄັນ ແລະ ຕ້ອງເອົາໃຈໃສ່. ຍ້ອນແນວນັ້ນພັກ, ລັດພວກເຮົາ ຕ້ອງເພີ່ມທະວີການພົວ ພັນຮ່ວມມື, ແລກປ່ຽນບົດຮຽນກັບບັນດາປະເທດໃນພາກພື້ນ ແລະ ໃນໂລກ. ສະເພາະວຽກງານກວດ ກາພັກຕ້ອງແລກປ່ຽນ ແລະ ຄົ້ນຄວ້າຊອກຮູ້ບົດຮຽນຂອງພັກອ້າຍນ້ອງ ແລະ ປະເທດເພື່ອນມິດຍຸດ ທະສາດ; ສຳລັບການກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ນອກຈາກພັກອ້າຍ ນ້ອງ ແລະ ປະເທດເພື່ອນມິດຍຸດທະສາດແລ້ວ ຍັງຕ້ອງມີການພົວພັນຮ່ວມມືກັບບັນດາອົງການກວດ ກາລັດ, ອົງການຕ້ານການສໍ້ລາດບັງຫຼວງ ຂອງບັນດາປະເທດອາຊຽນ, ອົງການຈັດຕັ້ງສາກົນທີ່ກ່ຽວ ຂ້ອງ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນການເຄື່ອນໄຫວປະຕິບັດສົນທິສັນຍາສະຫະປະຊາຊາດ ວ່າ ດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ອາຊະຍາກຳຂ້າມຊາດ, ໂຄສະນາຊີ້ແຈ້ງໃຫ້ບັນດາປະເທດ ແລະ ອົງການຈັດຕັ້ງສາກົນ ຮັບຮູ້ເຂົ້າໃຈເຖິງຄວາມເອົາໃຈໃສ່ຂອງພັກ ແລະ ລັດເຮົາໃນການສະກັດ ກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຢູ່ສ.ປ.ປ ລາວ.

6. <u>ການປັບປຸງການຈັດຕັ້ງ ແລະ ກໍ່ສ້າງພະນັກງານກວດກາ:</u>

ຄະນະພັກ ແລະ ການຈັດຕັ້ງທຸກຂັ້ນ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ ປັບປຸງຄະນະກວດກາ ພັກ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ແຕ່ສູນກາງລົງຮອດທ້ອງຖິ່ນ, ຮາກຖານ ແລະ ຕາມຂະແໜງການສາຍຕັ້ງໃຫ້ໜັກແໜ້ນ, ເຂັ້ມແຂງ; ບຳລຸງ-ສ້າງ, ເລືອກເຟັ້ນ ແລະ ປະກອບ ພະນັກງານໃຫ້ພຽງພໍກັບຄວາມຕ້ອງການທີ່ຈຳເປັນ ຂອງວຽກງານກວດກາ, ພ້ອມກັນນັ້ນກໍ່ສ້າງເງື່ອນ ໄຂດ້ານຕ່າງໆ ລວມທັງນະໂຍບາຍທີ່ຈຳເປັນເພື່ອໃຫ້ຄະນະກວດກາ ແລະ ອົງການກວດກາແຕ່ລະຂັ້ນ ໄດ້ເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນມີປະສິດທິຜົນດີຂຶ້ນເລື້ອຍໆ.

ສຳລັບຄະນະກວດກາ ແລະ ພະນັກງານກວດກາແຕ່ລະຂັ້ນກໍ່ຕ້ອງເປັນເຈົ້າການປັບປຸງຕົນເອງ ໃຫ້ມີລະດັບຄວາມຮູ້, ຄວາມສາມາດ, ມີລະບຽບວິໄນເຂັ້ມງວດ, ມີສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບ ກົດ ໝາຍ, ເປັນແບບຢ່າງເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງຖືກຕ້ອງ, ເຂັ້ມງວດ, ມີຄວາມຮັບຜິດຊອບບຸກບືນເຮັດແທ້ທຳຈິງ, ເບິ່ງບັນຫາເລິກເຊິ່ງຮອບຄອບ, ຊັດເຈນ, ພາວະ ວິໄສ, ມີທັດສະນະຖືກຕ້ອງ, ຕົວຈິງ, ມີຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ, ຊື່ສັດບໍລິສຸດ, ທ່ຽງທຳ, ບໍ່ອຽງຊ້າຍອຽງຂວາ, ເຂັ້ມງວດ ຕໍ່ຕົນເອງ, ບໍ່ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ອື່ນໆ.

III. <u>ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ.</u>

1. ຄະນະພັກ, ອົງການປົກຄອງ, ຄະນະກວດກາ ແລະ ຜູ້ເຮັດວຽກງານກວດກາແຕ່ລະຂັ້ນ ຕ້ອງຈັດຕັ້ງເຊື່ອມຊຶມມະຕິສະບັບນີ້ ພ້ອມທັງຫັນເປັນທິດທາງ, ແຜນການ, ແຜນງານ, ໂຄງການເພື່ອ ຈັດຕັ້ງ ປະຕິບັດໃຫ້ຖືກຕ້ອງສອດຄ່ອງກັບພາລະບົດບາດຂອງແຕ່ລະກະຊວງ-ອົງການ ແລະ ທ້ອງຖິ່ນ ຂອງຕົນ.

2. ທຸກການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ການ

ຈັດຕັ້ງສັງຄົມ, ລັດວິສະຫະກິດ, ອົງການລົ້ມລວມຊົນ, ສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ຊັ້ນຄົນຕ່າງໆໃນສັງຄົມ ຕ້ອງເປັນເຈົ້າການເຂົ້າຮ່ວມວຽກງານກວດກາພັກ, ກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງຢ່າງແຂງແຮງ ແລະ ມີປະສິດທິຜົນ, ໃນນີ້ຕ້ອງຖືສຳຄັນ ຄວາມເປັນແບບຢ່າງ ຂອງພະນັກງານການນຳຢູ່ແຕ່ລະຂັ້ນ, ແຕ່ລະຂະແໜງການໃນການຈັດຕັ້ງປະຕິບັດ ຂໍ້ກຳນົດ, ກົດລະບຽບຂອງພັກ ແລະ ລະບຽບ, ກົດໝາຍຂອງລັດ.

3. ການຕິດຕາມ, ກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕ້ອງດຳເນີນແຕ່ຫົວທີ, ຕໍ່ເນື່ອງ, ເປັນລະບົບປົກກະຕິຢູ່ທຸກຂົງເຂດວຽກງານ ແລະ ທຸກການຈັດຕັ້ງແຕ່ເທິງລົງຮອດຮາກຖານ ໂດຍຖືເອົາການກວດກາເພື່ອສະກັດກັ້ນເປັນຕົ້ນຕໍ, ເອົາການກວດກາແກ້ໄຂບ່ອນທີ່ມີການລະເມີດລະບຽບ, ກົດໝາຍເປັນອັນຈຳເປັນ; ບໍ່ອະນຸຍາດໃຫ້ການຈັດຕັ້ງໃດ, ບຸກຄົນໃດຢູ່ນອກການກວດກາ; ກວດກາແລ້ວ ຕ້ອງແກ້ໄຂຜົນຂອງການກວດກາ ຢ່າງຖືກຕ້ອງ, ຄົບຖ້ວນ, ເຂັ້ມງວດ ແລະ ທັນການ.

4. ຄະນະກວດກາພັກ, ອົງການກວດກາລັດ, ຄະນະຈັດຕັ້ງ ແລະ ບັນດາອົງການປົກປ້ອງກົດໝາຍແຕ່ລະຂັ້ນ ຕ້ອງເປັນເຈົ້າການຄົ້ນຄວ້າຈັດຕັ້ງປະຕິບັດ, ມີການປະສານສົມທົບກັນຢ່າງກົມກຽວໃນການກວດກາ ແລະ ສະເໜີ ແກ້ໄຂບັນຫາຕ່າງໆ ທີ່ພົວພັນເຖິງການຈັດຕັ້ງ, ພະນັກງານ, ສະມາຊິກພັກ ແລະ ພົນລະເມືອງທຸກຄົນ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຍຸຕິທຳ; ການຈັດຕັ້ງປະຕິບັດແຕ່ລະໄລຍະ ຕ້ອງສະຫຼຸບລາຍງານໃຫ້ກົມການເມືອງ, ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ ເປັນປົກກະຕິ.

5. ກົມການເມືອງ, ຄະນະເລຂາທິການສູນກາງພັກ, ລັດຖະບານ ເປັນຜູ້ຊີ້ນຳ ໃຫ້ຄະນະພັກ - ການນຳຂອງບັນດາກະຊວງ - ອົງການ ແລະ ທ້ອງຖິ່ນ, ຄະນະກວດກາສູນກາງພັກ, ອົງການກວດກາລັດຖະບານ ແລະ ຄະນະກວດກາແຕ່ລະຂັ້ນ ຄົ້ນຄວ້າຜັນຂະຫຍາຍມະຕິສະບັບນີ້ ເປັນອັນລະອຽດ ພ້ອມທັງຕິດຕາມ, ກວດກາ, ຊຸກຍູ້ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.

ຕ. ຄະນະບໍລິຫານງານສູນກາງພັກ

ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ

ພັກປະຊາຊົນປະຕິວັດລາວ ★ ຄະນະບໍລິຫານງານສູນກາງພັກ ★

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ.02../ ນຍ

ນະຄອນຫຼວງວຽງຈັນ, ວັນທີ..4../.12./2012

# ຍຸດທະສາດ
# ຕ້ານການສໍ້ລາດບັງຫຼວງ ແຕ່ນີ້ຮອດປີ 2020

## I. ສະພາບແວດລ້ອມ ແລະ ຄວາມຈຳເປັນຂອງການວາງຍຸດທະສາດ.

ໃນ 25 ປີກວ່າ ແຫ່ງການຈັດຕັ້ງປະຕິບັດແນວທາງການປ່ຽນແປງໃໝ່ ທີ່ມີຫຼັກການຂອງພັກ, ພວກເຮົາສາມາດຍາດໄດ້ຜົນງານອັນໃຫຍ່ຫຼວງຫຼາຍດ້ານ ໃນການປັບປຸງລະບົບການເມືອງ, ການຄຸ້ມຄອງບໍລິຫານລັດ, ການສ້າງ ແລະ ການບູລະນະລະບົບກົດໝາຍ, ການປັບປຸງກົນໄກຄຸ້ມຄອງເສດຖະກິດ-ສັງຄົມ ແລະ ການເຊື່ອມໂຍງສາກົນ ຊຶ່ງເປັນການສ້າງປະຖົມປັດໄຈ ທີ່ສຳຄັນໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມ, ການກໍ່ສ້າງລັດແຫ່ງກົດໝາຍ ແລະ ຮັບປະກັນໃຫ້ແກ່ການປະຕິບັດ ບັນດາລາດໝາຍ ສະທັດສະຫວັດດ້ານການພັດທະນາເປັນກ້າວໆມາ.

ແຕ່ຄຽງຄູ່ກັບຜົນງານທີ່ຍາດມາໄດ້ນັ້ນ, ການປະຕິບັດແນວທາງປ່ຽນແປງໃໝ່ ຢູ່ປະເທດເຮົາພວມປະເຊີນໜ້າກັບໄພອັນຕະລາຍຫຼາຍຢ່າງ, ໂດຍສະເພາະແມ່ນສະພາບການສໍ້ລາດບັງຫຼວງ ຊຶ່ງເກີດຂຶ້ນດ້ວຍຫຼາຍລະດັບທີ່ແຕກຕ່າງກັນ ຢູ່ໃນຫຼາຍຂົງເຂດ ເປັນຕົ້ນແມ່ນການຄຸ້ມຄອງບໍລິຫານລັດ, ການຄຸ້ມຄອງກໍ່ສ້າງພື້ນຖານໂຄງລ່າງ, ຄຸ້ມຄອງນຳໃຊ້ທຶນ - ຊັບສິນຂອງລັດ, ການເກັບລາຍຮັບເຂົ້າງົບປະມານ, ການຄຸ້ມຄອງນຳໃຊ້ລາຍຈ່າຍງົບປະມານ, ການສວຍໃຊ້ໜ້າທີ່ຕຳແໜ່ງຂອງພະນັກງານ-ລັດຖະກອນ ແລະ ອື່ນໆ ເຮັດໃຫ້ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການຈັດຕັ້ງ ແລະ ພະນັກງານ - ລັດຖະກອນຫຼຸດໜ້ອຍຖອຍລົງ, ການຫຼຸດໂຕນກັນລະຫວ່າງຜູ້ຮັ່ງກັບຜູ້ທຸກ ແມ່ນຈຸດໜຶ່ງທີ່ສັງຄົມເປັນຫ່ວງ, ການສໍ້ລາດບັງຫຼວງໄດ້ກາຍເປັນສິ່ງກີດຂວາງອັນໃຫຍ່ຫຼວງ ຕໍ່ການດຳເນີນພາລະກິດປ່ຽນແປງໃໝ່, ສິ່ງຜົນສະທ້ອນດ້ານລົບຕໍ່ບົດບາດການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ເປັນໄພຂົ່ມຂູ່ຕໍ່ການຄົງຕົວ ແລະ ຂະຫຍາຍຕົວຂອງລະບອບໃໝ່ຂອງພວກເຮົາ.

ສາເຫດຕົ້ນຕໍທີ່ພາໃຫ້ເກີດມີສະພາບຂ້າງເທິງນັ້ນ ຍ້ອນວ່າລະບອບນະໂຍບາຍ, ລະບົບກົດໝາຍ, ລະບຽບການຍັງບໍ່ທັນຄົບຊຸດ ແລະ ຮັດກຸມ, ສິ່ງທີ່ມີແລ້ວການຈັດຕັ້ງປະຕິບັດກໍ່ຍັງບໍ່ທັນເຂັ້ມງວດ, ເດັດຂາດ; ການປັບປຸງກົງຈັກການຈັດຕັ້ງຂອງແຕ່ລະຂັ້ນ ແລະ ຂະແໜງການຈຳນວນໜຶ່ງ ບໍ່ທັນກັບການຂະຫຍາຍຕົວຂອງເສດຖະກິດ - ສັງຄົມ; ພະນັກງານ – ລັດຖະກອນ, ພະນັກງານວິສາຫະກິດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຈຳນວນບໍ່ໜ້ອຍຂາດຄວາມເປັນແບບຢ່າງທີ່ດີ, ສະຕິເປັນເຈົ້າໃນການຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດບໍ່ສູງ, ແບບແຜນດຳລົງຊີວິດຂາດຄວາມໂປ່ງໃສ; ການຈັດຕັ້ງປະຕິບັດບັນດາລະບຽບ-ກົດໝາຍເວົ້າລວມ ແລະ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງບໍ່ໄດ້ຮັບຄວາມເອົາໃຈໃສ່ເທົ່າທີ່ຄວນ, ບໍ່ທັນຫັນເປັນນິຕິກຳ ຫຼື ຂໍ້ກຳນົດ, ລະບຽບການບັງຄັບໃຊ້ສະເພາະ ລວມທັງຍຸດທະສາດ, ໂຄງການ, ແຜນການລະອຽດໃນການສະກັດກັ້ນ ແລະ ແກ້ໄຂສະພາບການສໍ້ລາດບັງຫຼວງ; ບໍ່ທັນຕັ້ງໜ້າແກ້ໄຂຕໍ່ຜູ້ທີ່ມີພຶດຕິກຳສໍ້ລາດບັງຫຼວງຢ່າງເຂັ້ມງວດ ແລະ ທັນການ ຕາມກົດໝາຍຕ້ານການສໍ້ລາດບັງຫຼວງ ແລະ ລະບຽບການອື່ນໆ ທີ່ກຳນົດໄວ້.

ບົນພື້ນຖານການຮັບຮູ້ ແລະ ເຫັນໄດ້ຜົນຮ້າຍຂອງການສໍ້ລາດບັງຫຼວງ, ພັກ-ລັດເຮົາໄດ້ມີຄວາມພະຍາຍາມເອົາໃຈໃສ່ຕໍ່ບັນຫາດັ່ງກ່າວໂດຍໄດ້ອອກມະຕິ, ກຳນົດທິດທາງ,ນະໂຍບາຍ, ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຊຶ່ງຖືເປັນວຽກງານໜຶ່ງທີ່ມີຄວາມຈຳເປັນຕ້ອງໄດ້ເຮັດຢ່າງຕໍ່ເນື່ອງທັງເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງການຈັດຕັ້ງພັກ-ລັດ,ອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ; ນອກນັ້ນພວກເຮົາກໍ່ໄດ້ມີຄວາມຕັ້ງໜ້າເຂົ້າຮ່ວມກັບອົງການຈັດຕັ້ງສາກົນ ແລະ ພາກພື້ນ ເພື່ອປະກອບສ່ວນເຂົ້າໃນຄວາມພະຍາຍາມລວມ ຂອງວົງຄະນາຍາດສາກົນ ກ່ຽວກັບການຕໍ່ສູ້ຕ້ານການສໍ້ລາດບັງຫຼວງ. ເຖິງວ່າພັກ - ລັດພວກເຮົາ ໄດ້ມີຄວາມພະຍາຍາມຢ່າງບໍ່ລົດລະຕໍ່ບັນຫານີ້ກໍ່ຕາມ ແຕ່ຍັງບໍ່ສາມາດເຮັດໃຫ້ສະພາບການສໍ້ລາດບັງຫຼວງ ຫຼຸດໜ້ອຍຖອຍລົງໄດ້ຢ່າງຈະແຈ້ງ.

ສະນັ້ນ, ການສ້າງຍຸດທະສາດຕ້ານການສໍ້ລາດບັງຫຼວງ ແຕ່ນີ້ຮອດປີ 2020 ຈຶ່ງມີຄວາມສຳຄັນ ແລະ ຈຳເປັນເພື່ອກຳນົດຈຸດປະສົງ, ຄາດໝາຍ, ທັດສະນະ, ທິດນຳ, ເນື້ອໃນ ແລະ ວິທີການຕ້ານການສໍ້ລາດບັງຫຼວງ, ຄວາມຮັບຜິດຊອບຂອງອົງການຈັດຕັ້ງແຕ່ລະຂັ້ນ ແລະ ມາດຕະການຈັດຕັ້ງປະຕິບັດ, ແນໃສ່ເຮັດໃຫ້ການຕ້ານການສໍ້ລາດບັງຫຼວງ ຢູ່ ສປປ ລາວ ສືບຕໍ່ໄດ້ຮັບການປະຕິບັດໂດຍມີບ່ອນອີງທີ່ໜັກແໜ້ນຂຶ້ນຕື່ມ.

## II. ຈຸດປະສົງ, ຄາດໝາຍ, ທັດສະນະ ແລະ ທິດນຳ

### 1. ຈຸດປະສົງ.

1.1. ແນໃສ່ເຮັດໃຫ້ແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບການ,ຂໍ້ກຳນົດ, ກົດໝາຍໃຫ້ມີຄວາມສັກສິດ ແລະ ເດັດຂາດ ທັງຮັບປະກັນມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອດເຂດທົ່ວປະເທດ.

1.2. ເພື່ອປ້ອງກັນການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ, ການຈັດຕັ້ງອື່ນໆ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດໃຫ້ມີຄວາມໂປ່ງໃສ, ເຂັ້ມແຂງ ແລະ ໜັກແໜ້ນ; ສ້າງແນວຄິດ, ທັດສະນະຫຼັກໝັ້ນປະຕິວັດທີ່ຖືກຕ້ອງ ແລະ ສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນຕໍ່ການບໍລິຫານລັດ. ປະກອບສ່ວນໃຫ້ແກ່ການຍົກສູງບົດບາດການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດໃຫ້ສູງເດັ່ນຂຶ້ນ.

1.3. ເພື່ອກໍາຈັດ ແລະ ຕີຖອຍປະກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນແມ່ນພະຍາດອາດຍາສິດ, ຟຸມເຟືອຍ ແລະ ການສໍ້ລາດບັງຫຼວງ ໃຫ້ຫຼຸດລົງເທື່ອລະກ້າວ.

1.4. ເພື່ອປົກປັກຮັກສາຊັບສິນຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ ບໍ່ໃຫ້ຖືກຍັກຍອກ, ສໍ້ໂກງໂດຍທາງກົງ ແລະ ທາງອ້ອມ ຈາກບຸກຄົນ, ກຸ່ມຄົນ ແລະ ການຈັດຕັ້ງ.

## 2. ຄາດໝາຍ.

2.1. ພະນັກງານນໍາພາ - ຄຸ້ມຄອງທຸກຂັ້ນ, ລັດຖະກອນ, ທະຫານ, ຕໍາຫລວດ, ພະນັກງານວິຊາການທຸກປະເພດ, ນັກທຸລະກິດ ແລະ ປະຊາຊົນຊັ້ນຄົນຕ່າງໆຕ້ອງຮັບຮູ້ ແລະ ກໍາແໜ້ນແນວທາງນະແຜນໂຍບາຍ ຂອງພັກ, ກົດໝາຍ ຂອງລັດ ກ່ຽວກັບການຕ້ານການສໍ້ລາດບັງຫຼວງຢູ່ ສປປ ລາວ.

2.2. ເຮັດໃຫ້ພະນັກງານ - ລັດຖະກອນ, ທະຫານ, ຕໍາຫລວດ, ພະນັກງານວິຊາການທຸກປະເພດ, ນັກທຸລະກິດ ແລະ ປະຊາຊົນຊັ້ນຄົນຕ່າງໆ ເຊີດຊູນໍ້າໃຈຮັກຊາດ, ເປັນເຈົ້າຕົນເອງ ສ້າງ ຄວາມເຂັ້ມແຂງດ້ວຍຕົນເອງ, ບົນພື້ນຖານເຄົາລົບລະບຽບ-ກົດໝາຍ, ປາສະຈາກການມີພຶດຕິກໍາສໍ້ລາດບັງຫຼວງ ແລະ ເປັນເຈົ້າການໃນການແກ້ໄຂການສໍ້ລາດບັງຫຼວງ ກໍ່ຄືປະກົດການຫຍໍ້ທໍ້ອື່ນໆ.

2.3. ເຮັດໃຫ້ພະນັກງານ - ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານວິຊາການທຸກປະເພດ, ນັກທຸລະກິດ ແລະ ປະຊາຊົນຊັ້ນຄົນຕ່າງໆໄດ້ເຂົ້າຮ່ວມ ແລະ ມີຄວາມສາມາດຕິດຕາມ ກວດກາການເຄື່ອນໄຫວປະຕິບັດພາລະບົດບາດ, ໜ້າທີ່, ສິດ ຂອງໝົດທຸກຄົນ ແລະ ການຈັດຕັ້ງທຸກຂັ້ນ, ທຸກລະດັບ.

2.4. ເຮັດໃຫ້ທຸກການຈັດຕັ້ງ, ພະນັກງານທຸກປະເພດມີຄວາມເປັນເອກະພາບພາຍໃນ, ມີເຈດຈໍານົງ ແລະ ອຸດົມການທີ່ຖືກຕ້ອງ; ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ມີຄວາມສັກສິດ ຈໍາກັດສິ່ງຫຍໍ້ທໍ້ ແລະ ການສໍ້ລາດບັງຫຼວງໃຫ້ຫຼຸດລົງ; ການວາງນະໂຍບາຍບໍ່ໃຫ້ມີຊ່ອງຫວ່າງໃນການສໍ້ລາດບັງຫຼວງ.

2.5. ເຮັດໃຫ້ ສ ປ ປ ລາວ ເປັນໜຶ່ງໃນບັນດາປະເທດ ທີ່ອົງການໂປ່ງໃສສາກົນຮັບຮູ້ ແລະ ໃຫ້ການສະໜັບສະໜູນຕໍ່ນະໂຍບາຍ ແລະ ມາດຕະການຕ້ານການສໍ້ລາດບັງຫຼວງ ຂອງລັດຖະບານແຫ່ງ ສປປ ລາວ.

## 3. ທັດສະນະ.

3.1. ພັກ-ລັດ ຍາມໃດກໍ່ຖືເອົາການຕ້ານການສໍ້ລາດບັງຫຼວງເປັນໜ້າທີ່ສໍາຄັນ, ຮີບດ່ວນ ແລະ ຍາວນານຕະຫຼອດໄລຍະແຫ່ງການພັດທະນາເສດຖະກິດ-ສັງຄົມ ແລະ ການກໍ່ສ້າງລັດແຫ່ງກົດໝາຍ.

3.2. ການຕ້ານການສໍ້ລາດບັງຫຼວງເປັນປັດໄຈໜຶ່ງທີ່ສໍາຄັນ ເຮັດໃຫ້ສັງຄົມມີຄວາມສະຫງົບ,

ຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ, ປະຊາຊົນມີຄວາມເຊື່ອໝັ້ນຕໍ່ພັກ-ລັດ ແລະ ຕໍ່ລະບອບປະຊາທິປະໄຕປະຊາຊົນ.

3.3. ການຕ້ານການສໍ້ລາດບັງຫຼວງ ແມ່ນຄວາມຮັບຜິດຊອບຂອງທຸກການຈັດຕັ້ງ ໃນລະບົບການເມືອງ ແລະ ການຈັດຕັ້ງສັງຄົມ ພາຍໃຕ້ການນຳພາຂອງພັກ ເປັນຕົ້ນແມ່ນຄວາມຮັບຜິດຊອບຂອງການນຳທຸກຄົນ, ຂອງຜູ້ເປັນຫົວໜ້າ ຂອງບັນດາກະຊວງ - ອົງການ, ທ້ອງຖິ່ນ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມອື່ນໆ.

3.4. ພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ເພື່ອຊອກຮູ້ບົດຮຽນ ແລະ ຍາດແຍ່ງການສະໜັບສະໜູນ ໃນວຽກງານຕ້ານການສໍ້ລາດບັງຫຼວງ.

4. ທິດນຳ.

4.1. ນຳໃຊ້ບັນດາມາດຕາການຕ້ານການສໍ້ລາດບັງຫຼວງຢ່າງຕັ້ງໜ້າ, ເປັນເຈົ້າການໃນການສະກັດກັ້ນ, ເດັດຂາດໃນການແກ້ໄຂ ແລະ ແກ້ໄຂຢ່າງທັນການ, ໃນນັ້ນຖືເອົາການສະກັດກັ້ນແຕ່ຫົວທີເປັນຕົ້ນຕໍ ແລະ ເປັນບັນຫາພື້ນຖານຍາວນານ; ເອົາການຕ້ານການສໍ້ລາດບັງຫຼວງຕິດພັນກັບການປະຕິບັດນະໂຍບາຍການປະຢັດ ແລະ ຕ້ານການຟູມເຟືອຍ.

4.2. ການຈັດຕັ້ງ ແລະ ບຸກຄົນທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງຕ້ອງມີຄວາມໜັກແໜ້ນເຂັ້ມແຂງ, ມີຄຸນທາດການເມືອງ, ມີຄຸນສົມບັດ, ມີຄວາມຮູ້, ມີຄວາມສາມາດທີ່ແນ່ນອນ, ເປັນຫຼັກແຫຼ່ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານຂອງຕົນ, ໂດຍໄດ້ຮັບການສະໜອງບັນດາພາຫະນະ ແລະ ອຸປະກອນທີ່ຈຳເປັນ ເພື່ອເຄື່ອນໄຫວວຽກງານໃຫ້ມີປະສິດທິຜົນ ແລະ ທັນການ.

4.3. ຕ້ອງເຮັດໃຫ້ການຕ້ານການສໍ້ລາດບັງຫຼວງກາຍເປັນໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະນັກງານທຸກປະເພດ, ທຸກການຈັດຕັ້ງ ແລະ ທົ່ວສັງຄົມ. ການຕ້ານການສໍ້ລາດບັງຫຼວງຕ້ອງເລີ່ມຈາກຄວາມເປັນແບບຢ່າງຂອງແຕ່ລະຄົນ ເປັນຕົ້ນພະນັກງານນຳພາ-ຄຸ້ມຄອງແຕ່ລະຂັ້ນ.

4.4. ຕ້ອງຕັ້ງໜ້າ, ມີຄວາມພະຍາຍາມສູງໃນການຈຳກັດ ແລະ ອັດຊ່ອງຫວ່າງທີ່ກໍ່ໃຫ້ເກີດມີການສໍ້ລາດບັງຫຼວງ, ເຮັດໃຫ້ສະພາບຂອງການສໍ້ລາດບັງຫຼວງທີ່ມີຢູ່ໃນປະຈຸບັນຫຼຸດໜ້ອຍຖອຍລົງ ແລະ ໄດ້ຮັບການແກ້ໄຂຢ່າງຕັ້ງໜ້າກວ່າເກົ່າ.

4.5. ການຕ້ານການສໍ້ລາດບັງຫຼວງເປັນວຽກໜຶ່ງ ທີ່ການຈັດຕັ້ງແຕ່ລະຂັ້ນຕ້ອງໄດ້ເອົາໃຈໃສ່, ເຮັດເປັນປະຈຳ, ເຮັດຢ່າງມີຈຸດສຸມ, ມີແຜນການລະອຽດໃນແຕ່ລະໄລຍະ ຂອງອົງການປົກຄອງ ເພື່ອຈັດຕັ້ງການຕິດຕາມ ກວດກາ ແລະ ຖ້າເຫັນມີໜໍ່ແໜງການສໍ້ລາດບັງຫຼວງເກີດຂຶ້ນຢູ່ບ່ອນໃດ, ບ່ອນນັ້ນຕ້ອງເປັນເຈົ້າການແກ້ໄຂ ແລະ ລົບລ້າງໃຫ້ໄດ້ແຕ່ຫົວທີໂລດ.

## III. <u>ເນື້ອໃນ, ວິທີການ ຕ້ານການສໍ້ລາດບັງຫຼວງ.</u>

### 1. ສຶກສາອົບຮົມການເມືອງ-ແນວຄິດ.

1.1. ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິຊາການທຸກປະເພດ, ນັກທຸລະກິດ ແລະ ປະຊາຊົນຊັ້ນ

ຄົນຕ່າງໆ ໃຫ້ມີຈັນຍາບັນທີ່ຖືກຕ້ອງ, ມີຄຸນສົມບັດສົມທາປະຕິວັດ, ມີຄວາມສັດຊື່ບໍລິສຸດ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບ, ກົດໝາຍຢ່າງເຂັ້ມງວດ; ທ້າວຫັນບຸກບືນປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍດ້ວຍຄວາມຮັບຜິດຊອບສູງ ແລະ ໂປ່ງໃສ.

1.2. ສຶກສາອົບຮົມໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານວິຊາການທຸກປະເພດ, ນັກທຸລະກິດ ແລະ ປະຊາຊົນຊັ້ນຄົນຕ່າງໆ ເຊື່ອມຊຶມກໍາແໜ້ນ ບັນດາພຶດຕິກໍາການສໍ້ລາດບັງຫຼວງທີ່ກໍານົດໄວ້ໃນ ກົດໝາຍຕ້ານການສໍ້ລາດບັງຫຼວງ ແລະ ລະບຽບ, ກົດໝາຍອື່ນໆ; ໂຄສະນາເຜີຍແຜ່ຜົນຮ້າຍ ແລະ ຄວາມອັນຕະລາຍຂອງການສໍ້ລາດບັງຫຼວງ ໃນທົ່ວສັງຄົມ, ເພື່ອໃຫ້ພົນລະເມືອງເປັນເຈົ້າການເຂົ້າຮ່ວມຢ່າງຕັ້ງໜ້າ ໃນການຕ້ານການສໍ້ລາດບັງຫຼວງ.

## 2. ປັບປຸງ ແລະ ສ້າງນິຕິກໍາ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ.

2.1. ປັບປຸງບັນດາກົດໝາຍ ແລະ ນິຕິກໍາ ທີ່ໄດ້ປະກາດໃຊ້ແລ້ວເຊັ່ນ:

- ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງໃຫ້ກວມເອົາພົນລະເມືອງລາວ, ຊາວຕ່າງດ້າວ, ຊາວຕ່າງປະເທດ, ພະນັກງານອົງການຈັດຕັ້ງສາກົນ ແລະ ບັນດາພາກສ່ວນວິສາຫະກິດ ຂອງເອກະຊົນ.

- ກົດໝາຍວ່າດ້ວຍການກວດກາລັດ ເພື່ອເຮັດໃຫ້ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ຄວາມຮັບຜິດຊອບ ຂອງອົງການກວດກາລັດຕາມຂັ້ນບໍລິຫານ ແລະ ກວດກາລັດຕາມຂະແໜງການຈະແຈ້ງ ແລະ ເປັນເຈົ້າການໃນການປະຕິບັດໜ້າທີ່ຢ່າງມີປະສິດທິພາບ.

- ນິຕິກໍາກ່ຽວກັບການຄຸ້ມຄອງ, ນໍາໃຊ້ຊັບສົມບັດຂອງລັດໃຫ້ສອດຄ່ອງກັບແຕ່ລະໄລຍະເປັນຕົ້ນ: ທີ່ດິນ, ເຮືອນ, ພາຫະນະ ທີ່ພະນັກງານ-ລັດຖະກອນ ນໍາໃຊ້ຢ່າງເປີດເຜີຍ, ກ່ອນອື່ນໝົດ ແມ່ນຂອງຜູ້ເປັນຫົວໜ້າ, ຄະນະນໍາ ຂອງການຈັດຕັ້ງທຸກຂັ້ນ ແລະ ທຸກຂະແໜງການ.

- ນິຕິກໍາກ່ຽວກັບວຽກງານການເງິນ, ທະນາຄານ, ຂໍ້ກໍານົດການຂຶ້ນທະບຽນອະສັງຫາລິມະຊັບ, ຫຼັກຊັບ ໃຫ້ຄົບຖ້ວນ ແລະ ຄົ້ນຄວ້າປັບປຸງດໍາລັດວ່າດ້ວຍການຟອກເງິນໃຫ້ກາຍເປັນກົດໝາຍ.

- ນິຕິກໍາກ່ຽວກັບການຄຸ້ມຄອງນໍາໃຊ້ຊັບພະຍາກອນທໍາມະຊາດ, ບັນດາແຫຼ່ງທ່າແຮງສາທາລະນະ, ການປະມູນ, ຫົວໜ່ວຍລາຄາ, ມາດຖານເຕັກນິກ, ການສໍາປະທານໂຄງການຕ່າງໆ, ການກໍ່ສ້າງພື້ນຖານໂຄງລ່າງ, ການບໍລິການດ້ວຍທຶນຂອງລັດ, ທຶນປະກອບສ່ວນຂອງສັງຄົມ ແລະ ທຶນຊ່ວຍເຫຼືອລ້າ ຂອງຕ່າງປະເທດໃຫ້ມີຄວາມໂປ່ງໃສ.

- ປັບປຸງບັນດາກົດໝາຍ ແລະ ນິຕິກໍາ ທີ່ປະກາດໃຊ້ແລ້ວຢູ່ໃນແຕ່ລະຂົງເຂດ, ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະຢູ່ປະເທດເຮົາ.

2.2. ຄົ້ນຄວ້າ ແລະ ສ້າງນິຕິກໍາໃໝ່ທີ່ຈໍາເປັນເຊັ່ນ:

- ດໍາລັດວ່າດ້ວຍການແຈ້ງຊັບສົມບັດ ແລະ ລາຍຮັບຕ່າງໆ ຂອງພະນັກງານນໍາພາ-ຄຸ້ມຄອງ, ພະນັກງານວິຊາການບາງຂົງເຂດ.

- ນິຕິກໍາ ແລະ ລະບຽບການ ຂອງອົງການກ່ຽວກັບການຈັດຊື້, ຈັດຈ້າງ ເພື່ອບໍລິການສະດວກວ່ອງໄວ ແລະ ມີຄວາມໂປ່ງໃສ ໃນການຊື້ - ການຂາຍວັດຖຸອຸປະກອນ ແລະ ຊັບສົມບັດຕ່າງໆ ຂອງລັດ.

- ຄົ້ນຄວ້າ ແລະ ສ້າງນິຕິກຳໃໝ່ອື່ນໆ ຢູ່ໃນແຕ່ລະຂົງເຂດວຽກງານທີ່ເຫັນວ່າມີຄວາມຈຳເປັນ.

3. ປັບປຸງກົນໄກການຄຸ້ມຄອງລັດ:

3.1. ປະຕິບັດຖືກຕ້ອງ ແລະ ເຂັ້ມງວດການແບ່ງຂັ້ນຄຸ້ມຄອງ, ການປ້ອງກັນພະນັກງານ-ລັດຖະກອນ ຕາມພາລະບົດບາດ, ໜ້າທີ່, ຂອບເຂດສິດ ຂອງແຕ່ລະຂັ້ນ, ແກ້ໄຂສະພາບຊ້ຳຊ້ອນ, ກ້າວກ່າຍ ແລະ ການປ່ອຍປະການຄຸ້ມຄອງພະນັກງານ - ລັດຖະກອນ; ກຳນົດຄວາມຮັບຜິດຊອບ ຂອງຜູ້ເປັນຫົວໜ້າອົງການ, ການຈັດຕັ້ງ, ກົມກອງໃຫ້ລະອຽດ ແລະ ອົງໃສ່ຄວາມຮັບຜິດຊອບດັ່ງກ່າວ ເພື່ອຄຸ້ມຄອງ, ຕິດຕາມ ກວດກາ ແລະ ຕີລາຄາແບ່ງປະເພດພະນັກງານ-ລັດຖະກອນ.

3. 2. ປັບປຸງ ແລະ ປະຕິບັດບັນດາຂໍ້ກຳນົດກ່ຽວກັບການຄຸ້ມຄອງນຳໃຊ້ພະນັກງານ - ລັດຖະກອນ ໃຫ້ຖືກຕາມມາດຖານໃນການຮັບເອົາໃໝ່, ການແຕ່ງຕັ້ງ, ການແຕ່ງຕັ້ງຄືນໃໝ່, ການໂຍກຍ້າຍ, ການແກ້ໄຂຕໍ່ຜູ້ລະເມີດລະບຽບ ກົດໝາຍ.

3.3. ເຂັ້ມງວດໃນການປະຕິບັດລະບຽບ ກົດໝາຍກ່ຽວກັບພາສີ - ອາກອນ, ການສົ່ງອອກ - ນຳເຂົ້າ ແລະ ການເກັບອາກອນພາຍໃນໃຫ້ຄົບຖ້ວນ, ຮັດກຸມ ເພື່ອບໍ່ໃຫ້ມີຊ່ອງຫວ່າງແນໃສ່ຮັບປະກັນຄວາມໂປ່ງໃສ, ຍຸຕິທຳໃນການແກ່ງແຍ້ງແຂ່ງຂັນລະຫວ່າງບັນດາຫົວໜ່ວຍວິສາຫະກິດ ທີ່ຂຶ້ນກັບທຸກພາກສ່ວນເສດຖະກິດ.

3.4. ປັບປຸງກົນໄກ ແລະ ແບບແຜນວິທີເຮັດວຽກຂອງບັນດາກະຊວງ - ອົງການ ແລະ ພາກສ່ວນຕ່າງໆເພື່ອແກ້ໄຂກ່ຽວກັບການຊ້ຳຊ້ອນ, ການກົດໜ່ວງຖ່ວງດຶງ, ແກ່ຍາວເວລາໃນການປະຕິບັດໜ້າທີ່ວຽກງານ.

3.5. ຍົກສູງຄຸນນະພາບ ແລະ ປະສິດທິຜົນການເຄື່ອນໄຫວວຽກງານຕິດຕາມ ກວດກາ ຂອງບັນດາກະຊວງ - ອົງການ, ຮັບປະກັນຄວາມຖືກຕ້ອງ ຂອງການສະຫຼຸບລາຍງານຜົນ ຂອງການຕິດຕາມ ກວດກາ, ເມື່ອພົບເຫັນບັນຫາທີ່ເປັນພຶດຕິກຳສໍ້ລາດບັງຫຼວງ ກໍ່ຕ້ອງສະເໜີໃຫ້ອົງການກ່ຽວຂ້ອງປັບປຸງ, ແກ້ໄຂ ແລະ ດຳເນີນຄະດີຕາມລະບຽບ, ກົດໝາຍຢ່າງເຂັ້ມງວດ, ທັນການ.

3.6. ຄົ້ນຄວ້າ ແລະ ສ້າງກົນໄກກ່ຽວກັບຄວາມຮັບຜິດຊອບໃນການແກ້ໄຂຄຳຮ້ອງທຸກ, ຄຳສະເໜີຂອງພະນັກງານ-ລັດຖະກອນ ແລະ ປະຊາຊົນໃຫ້ຈະແຈ້ງ, ຮັດກຸມ, ຄົບຖ້ວນ ແລະ ວ່ອງໄວ.

3.7. ສ້າງກົນໄກ ແລະ ລະບຽບການເພື່ອສົ່ງເສີມໃຫ້ພົນລະເມືອງ, ສື່ມວນຊົນ ແລະ ການຈັດຕັ້ງສັງຄົມຕ່າງໆ ມີສ່ວນຮ່ວມໃນການຕ້ານການສໍ້ລາດບັງຫຼວງ ພ້ອມທັງປົກປ້ອງຜູ້ໃຫ້ຂໍ້ມູນ, ຂ່າວສານ ຫຼື ຜູ້ທີ່ຄົ້ນພົບພຶດຕິກຳການສໍ້ລາດບັງຫຼວງ ແລະ ຍ້ອງຍໍສັນລະເສີນການຈັດຕັ້ງ, ບຸກຄົນທີ່ມີຜົນງານໃນການຕ້ານການສໍ້ລາດບັງຫຼວງ.

3.8. ປັບປຸງກົນໄກການຕິດຕາມ ກວດກາ, ກວດສອບ, ການສືບສວນ - ສອບສວນ, ການດຳເນີນຄະດີ, ຕັດສິນຄະດີ, ການພິພາກສາ ແລະ ການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການສໍ້ລາດບັງຫຼວງ ຕ້ອງດຳເນີນຢ່າງເປີດເຜີຍ, ມີຄວາມຍຸຕິທຳ ແລະ ທັນເວລາ.

3.9. ປັບປຸງລະບົບເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍອື່ນໆ ໃຫ້ແກ່ພະນັກງານ-ລັດຖະກອນທຸກຂັ້ນຕາມຄວາມເໝາະສົມໂດຍສອດຄ່ອງກັບການຂະຫຍາຍຕົວ ຂອງເສດຖະກິດ.

4. ປັບປຸງການຈັດຕັ້ງ ແລະ ພະນັກງານ ທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ.

4.1. ປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ກົນໄກ, ລະບອບ, ລະບຽບການເຄື່ອນໄຫວ ຂອງອົງການ ແລະ ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ແລະ ແຕ່ລະຂົງເຂດວຽກງານໃຫ້ຮັດກຸມ, ລະອຽດ ແລະ ຈະແຈ້ງຮັບປະກັນໃຫ້ການເຄື່ອນໄຫວປະຕິບັດໜ້າທີ່ມີຄວາມທະລຸລົ່ງ, ວ່ອງໄວ, ທັນການ ແລະ ມີປະສິດທິຜົນສູງ.

4.2. ສ້າງ ແລະ ບຳລຸງຍົກລະດັບຄວາມຮູ້-ຄວາມສາມາດທາງດ້ານວິຊາສະເພາະ-ວິຊາການ, ຄຸນທາດການເມືອງ, ຄຸນສົມບັດ, ຈັນຍາບັນທາງດ້ານວິຊາຊີບ ໃຫ້ແກ່ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງເຮັດໃຫ້ຖັນແຖວພະນັກງານດັ່ງກ່າວມີຄວາມໂປ່ງໃສ, ເດັດຂາດ, ເຂັ້ມງວດ ໃນການດຳເນີນການກວດກາ, ກວດສອບ, ສືບສວນ-ສອບສວນ, ດຳເນີນຄະດີ ແລະ ຕັດສິນຄະດີ ຕາມກົດໝາຍ

4.3. ສະໜອງ ແລະ ປັບປຸງຍົກລະດັບການນຳໃຊ້ອຸປະກອນເຕັກນິກທັນສະໄໝທີ່ຈຳເປັນໃຫ້ແກ່ວຽກງານຕ້ານການສໍ້ລາດບັງຫຼວງ.

5. **ການແກ້ໄຂການສໍ້ລາດບັງຫຼວງ.**

ຜູ້ມີພຶດຕິກຳສໍ້ລາດບັງຫຼວງຕ້ອງໄດ້ແກ້ໄຂ ແລະ ນຳໃຊ້ 4 ມາດຕະການດັ່ງນີ້ :

5.1. ມາດຕະການສຶກສາອົບຮົມ: ຜ່ານການດຳເນີນການກວດກາ ຫາກພົບເຫັນການກະທຳຜິດເບົາ, ຜູ້ກະທຳຜິດມີຄວາມຈິງໃຈລາຍງານ, ຮັບສາລະພາບການກະທຳຜິດ ຂອງຕົນຕໍ່ການຈັດຕັ້ງ ແລະ ສິ່ງຊັບທີ່ໄດ້ເອົາໄປໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ຄົບຖ້ວນແລ້ວ ຈະໄດ້ຮັບການສຶກສາອົບຮົມ ແລະ ກ່າວເຕືອນ.

5.2. ມາດຕະການທາງວິໄນ: ພະນັກງານ ຫຼື ບຸກຄົນໃດ ທີ່ໄດ້ກະທຳຜິດເບົາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີດັ່ງນີ້:

- ຕິຕຽນ, ກ່າວເຕືອນຄວາມຜິດ ໂດຍບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດ ຂອງຜູ້ກ່ຽວ;
- ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ;
- ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
- ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ນອກຈາກນັ້ນແລ້ວ, ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນເອົາໄປໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ຄົບຖ້ວນ.

5.3. ມາດຕະການທາງອາຍາ: ພະນັກງານ ຫຼື ບຸກຄົນໃດໄດ້ມີກະທຳຜິດໃນພຶດຕິກຳ ຕາມທີ່ໄດກຳນົດໄວ້ໃນກົດໝາຍຕ້ານການສໍ້ລາດບັງຫຼວງ,ເປັນການກະທຳຜິດໜັກ, ພາຍຫຼັງທີ່ໄດ້ດຳເນີນການກວດກາ, ສືບສວນ-ສອບສວນເຫັນວ່າມີຂໍ້ມູນ, ຫຼັກຖານໜັກແໜ້ນ, ຮັດກຸມແລ້ວຕ້ອງສະຫຼຸບຄະດີ ແລ້ວປະກອບສຳນວນສົ່ງໃຫ້ໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງຂຶ້ນສານ.

5.4. ມາດຕະການທາງແພ່ງ: ພະນັກງານ ຫຼື ບຸກຄົນໃດ ໄດ້ມີການກະທຳຜິດໃນພຶດຕິກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຕ້ານການສໍ້ລາດບັງຫຼວງ ນອກຈາກຈະໄດ້ຮັບໂທດທາງອາຍາ ແລ້ວຍັງຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ ແລະ ຊັບສິນທີ່ໄດ້ມາຈາກ ການກະທຳຜິດຈະຖືກຮິບເປັນຂອງລັດທັງໝົດ.

IV. ຄວາມຮັບຜິດຊອບ ແລະ ມາດຕະການຈັດຕັ້ງປະຕິບັດ :

ກ. ຄວາມຮັບຜິດຊອບ.

1. ຄວາມຮັບຜິດຊອບຂອງອົງການກວດກາລັດຖະບານ.

1.1. ຈັດຕັ້ງຜັນຂະຫຍາຍຍຸດທະສາດນີ້ອອກເປັນນິຕິກຳຕ່າງໆ ທີ່ຈຳເປັນ ແລະ ກຳນົດເປັນແຜນ ການ ປະຕິບັດແຕ່ລະໄລຍະໃນການຕ້ານການສໍ້ລາດບັງຫຼວງ.

1.2. ເປັນເສນາທິການໃຫ້ນາຍົກລັດຖະມົນຕີໃນການຕິດຕາມ, ຊຸກຍູ້ບັນດາກະຊວງ-ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຜັນຂະຫຍາຍຍຸດທະສາດນີ້ ອອກເປັນແຜນການ, ແຜນງານ, ໂຄງການ ລະອຽດແຕ່ລະໄລຍະ ແລະ ການຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບໃນທົ່ວປະເທດ.

1.3. ຮ່ວມກັບກະຊວງພາຍໃນ ແລະ ກະຊວງຍຸຕິທຳຕິດຕາມ, ຊຸກຍູ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນກວດກາປັບປຸງຄືນກົດໝາຍ, ນິຕິກຳອື່ນໆທີ່ບໍ່ສອດຄ່ອງ, ບໍ່ຮັດກຸມ ແລະ ສ້າງນິຕິກຳ ໃໝ່ທີ່ຈຳເປັນ ເພື່ອນຳສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດປັບປຸງ ແລະ ປະກາດໃຊ້ ເປັນຕົ້ນ ແມ່ນບັນດານິຕິກຳທີ່ພົວພັນເຖິງການຕ້ານການສໍ້ລາດບັງຫຼວງ, ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດ ຍຸດທະສາດນີ້ມີປະສິດທິຜົນ.

1.4. ປະສານສົມທົບກັບອົງການທີ່ກ່ຽວຂ້ອງຕ່າງໆ ເປັນຕົ້ນແມ່ນອົງການປົກປ້ອງກົດໝາຍ ຈັດຕັ້ງປະຕິບັດບັນດາເນື້ອໃນ, ວິທີການໃນການຕ້ານການສໍ້ລາດບັງຫຼວງ ທີ່ກ່ຽວພັນກັບຂອບເຂດ ຄວາມຮັບຜິດຊອບ ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນຍຸດທະສາດນີ້.

1.5. ຊີ້ນຳ ອົງການກວດກາລັດຢູ່ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນເຮັດໜ້າທີ່ ຕິດຕາມ, ກວດກາ, ການຈັດຕັ້ງປະຕິບັດຍຸດທະສາດນີ້ຢ່າງເປັນປົກກະຕິ.

1.6. ຈັດກອງປະຊຸມຖອດຖອນບົດຮຽນ ພ້ອມທັງສະຫຼຸບລາຍງານຜົນຂອງການປະຕິບັດຕໍ່ ນາຍົກລັດຖະມົນຕີຊາບເປັນແຕ່ລະໄລຍະ; ສະເໜີອົງການທີ່ມີສິດຍ້ອງຍໍຊົມເຊີຍຕໍ່ອົງການຈັດຕັ້ງ, ບຸກຄົນຜູ້ທີ່ມີຜົນງານດີເດັ່ນ ແລະ ສຶກສາອົບຮົມ, ກ່າວເຕືອນ, ລົງໂທດຕາມລະບຽບ, ກົດໝາຍຕໍ່ອົງ ການຈັດຕັ້ງ ແລະ ບຸກຄົນທີ່ລະເມີດ ຍຸດທະສາດສະບັບນີ້.

2. ຄວາມຮັບຜິດຊອບຂອງກະຊວງ-ອົງການ ແລະ ການຈັດຕັ້ງແຕ່ລະຂັ້ນ:

2.1. ຈັດຕັ້ງການຄົ້ນຄວ້າ, ເຊື່ອມຊຶມ ຍຸດທະສາດສະບັບນີ້ ແລະ ນິຕິກຳອື່ນໆ ທີ່ພົວພັນເຖິງ ການສະກັດກັ້ນ ແລະ ແກ້ໄຂການສໍ້ລາດບັງຫຼວງໃຫ້ທົ່ວເຖິງ, ເລິກເຊິ່ງ ແລະ ຫັນເປັນແຜນການ, ແຜນ ງານ, ໂຄງການຂອງຕົນ ພ້ອມທັງຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

2.2. ເປັນເຈົ້າການຄົ້ນຄວ້າ, ປັບປຸງນິຕິກຳທີ່ມີແລ້ວ, ອອກນິຕິກຳໃໝ່ ແລະ ລະບຽບການສະເພາະ ເພື່ອຄຸ້ມຄອງ, ປ້ອງກັນພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

2.3. ຕິດຕາມ ກວດກາ ແລະ ແກ້ໄຂບັນດາປະກົດການຫຍໍ້ທໍ້, ທາງສຽງ, ການສະເໜີ, ການລາຍງານ ຂອງພົນລະເມືອງຕໍ່ພະນັກງານ - ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນຕາມລະບຽບກົດໝາຍ ຢ່າງເຂັ້ມງວດ ແລະ ທັນການ.

2.4. ປົກປ້ອງ-ສົ່ງເສີມປະຊາຊົນ, ສື່ມວນຊົນ ແລະ ການຈັດຕັ້ງສັງຄົມຕ່າງໆ ທີ່ມີສ່ວນຮ່ວມໃນການຕ້ານການສໍ້ລາດບັງຫຼວງ ຕາມລະບຽບ ກົດໝາຍ.

2.5. ປະຕິບັດຜົນຂອງການກວດກາຢ່າງເຂັ້ມງວດ: ການປະຕິບັດວິໄນ, ການລົງໂທດຕໍ່ຜູ້ສໍ້ລາດບັງຫຼວງ, ຮິບ ແລະ ເກັບກູ້ຊັບສິນ, ເງິນ, ຄຳ ຈາກການສໍ້ລາດບັງຫຼວງຄືນໃຫ້ລັດຕາມສິດ ແລະ ຄວາມຮັບຜິດຊອບຂອງຕົນ; ເຫດເກີດຂຶ້ນຢູ່ບ່ອນໃດໃຫ້ຄະນະພັກ - ຄະນະນຳ ບ່ອນນັ້ນເປັນເຈົ້າການແກ້ໄຂຢ່າງທັນການ.

2.6. ທັນເອົາວຽກງານຕ້ານການສໍ້ລາດບັງຫຼວງ ເຂົ້າໃນຫຼັກສູດການສອນ - ການຮຽນ ຂອງລະບົບການສຶກສາຊັ້ນຮຽນຕ່າງໆ ເພື່ອສ້າງໃຫ້ຄົນລຸ້ນໜຸ່ມມີຄວາມຮັບຮູ້ເຂົ້າໃຈ ແລະ ປູກຈິດສຳນຶກ ແລະ ການມີສະຕິເຄົາລົບລະບຽບ ກົດໝາຍແຕ່ທີວທີ.

2.7. ດຳເນີນການຕິດຕາມ ກວດກາ, ສະຫຼຸບຕີລາຄາການຈັດຕັ້ງປະຕິບັດຍຸດທະສາດຕ້ານການສໍ້ລາດບັງຫຼວງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງລາຍງານໃຫ້ອົງການກວດກາລັດ ແລະ ຂັ້ນເທິງຖັດຕົນເປັນປົກກະຕິ.

## ຂ. ມາດຕະການຈັດຕັ້ງປະຕິບັດ.

1. ການຈັດຕັ້ງທຸກຂັ້ນ, ທຸກຂະແໜງການ ຕ້ອງເພີ່ມທະວີການຕິດຕາມ ກວດກາ ເຊິ່ງກັນ ແລະ ກັນແຕ່ເທິງລົງລຸ່ມ, ແຕ່ລຸ່ມຂຶ້ນເທິງໃຫ້ເປັນລະບົບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ດ້ວຍການກຳນົດເອົາວຽກງານຕ້ານການສໍ້ລາດບັງຫຼວງ ເຂົ້າໃນພາລະບົດບາດ ຂອງແຕ່ລະ ພາກສ່ວນ ເພື່ອຮັບປະກັນເຮັດໃຫ້ຍຸດທະສາດ ແລະ ບັນດາຂໍ້ກຳນົດ, ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ເປັນປົກກະຕິ, ເຮັດໃຫ້ມີຄວາມໂປ່ງໃສໃນການເຄື່ອນໄຫວປະຕິບັດໜ້າທີ່ ຂອງທຸກການຈັດຕັ້ງ ແລະ ບຸກຄົນພະນັກງານ-ລັດຖະກອນ.

2. ໃຫ້ການນຳຂອງທຸກກະຊວງ-ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ຕິດຕາມ ກວດກາ ຕໍ່ຄຳສະເໜີຂອງພົນລະເມືອງ, ທີ່ພົວພັນເຖິງຄວາມຮັ່ງມີຜິດປົກກະຕິ ຂອງພະນັກງານ-ລັດຖະກອນທຸກລະດັບແຕ່ລະຂັ້ນ, ແຕ່ລະຂະແໜງການ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຂັ້ນຕົນ.

3. ຍົກສູງບົດບາດຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ, ການຈັດຕັ້ງວິສາຫະກິດ, ການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ໃນການເຂົ້າຮ່ວມວຽກງານຕ້ານການສໍ້ລາດບັງຫຼວງໃຫ້ມີຄວາມຕັ້ງໜ້າ ແລະ ເປັນເຈົ້າການຂຶ້ນຕື່ມ.

4. ຖືເອົາມາດຕະການສະກັດກັ້ນເປັນຕົ້ນຕໍ ແລະ ເອົາການແກ້ໄຂ ຫຼືລົງໂທດຕາມລະບຽບ ກົດ

ໝາຍເປັນມາດຕະການທີ່ຈຳເປັນ; ການຈັດຕັ້ງທຸກຂັ້ນ ແລະ ພົນລະເມືອງທຸກຄົນ ຕ້ອງຖືເອົາການເຂົ້າຮ່ວມວຽກງານຕ້ານການສໍ້ລາດບັງຫຼວງເປັນພັນທະຂອງຕົນ.

5. ອົງການກວດກາລັດຖະບານ ເປັນຜູ້ຕິດຕາມ ກວດກາ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ໃນແຕ່ລະໄລຍະ  ພ້ອມທັງລາຍງານສະພາບການຈັດຕັ້ງປະຕິບັດໃຫ້ນາຍົກລັດຖະມົນຕີເປັນປົກກະຕິ.

6. ການນຳ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ ໃຫ້ສຳເລັດຜົນເປັນຢ່າງດີ.

**ນາຍົກລັດຖະມົນຕີ**

**ທອງສິງ ທຳມະວົງ**